# ການປະຕິບັດສະມາທິໃນຫຼວງພະບາງ

**ການວາງສະແດງຂອງສູນຂໍ້ມູນເອກະສານຮູບພາບພະພຸດທະສາສະໜາ**
**ຮູບພາບທາງດ້ານປະຫວັດສາດທີ່ສະສົມມາຈາກວັດຕ່າງໆ**
**ແລະ**
**ຮູບພາບງານການປະຕິບັດວິປັດສະນາຂອງຄະນະສົງຫຼວງພະບາງ**
**ຖ່າຍໂດຍ ອາຈານ ຮັນ ເກອອກ ເບີເກີ**

*ບໍ່ມີກິດຈະກຳໃດທີ່ຈະສຳຄັນໄປກວ່າການປະຕິບັດສະມາທິ ສຳລັບການໃຊ້ຊີວິດຢູ່ໃນວັດ. ໂດຍການຝຶກສະມາທິຈຶ່ງເຮັດໃຫ້ພະສົງສາມາດບັນລຸເຖິງຄວາມສະຫງົບຂອງຈິດໃຈ, ຈາກການປະຕິບັດສະມາທິຈຶ່ງເຮັດໃຫ້ພະສົງບັນລຸປັນຍາຄວາມຮູ້ແຈ້ງ, ແລະຈາກການປະຕິບັດສະມາທິຈຶ່ງເຮັດໃຫ້ພະສົງສາມາດບັນລຸເຖິງເປົ້າໝາຍສູງສຸດຄືການຕັດສະຮູ້ແລະເຂົ້າເຖິງພະນິບພານ.*

*ການປະຕິບັດສະມາທິແລະການສອນວິທີປະຕິບັດສະມາທິນີ້ ເປັນປະເພນີທີ່ເຄີຍປະຕິບັດກັນມາເປັນເວລາຫລາຍສະຕະວັດແລ້ວໃນຫຼວງພະບາງ. ວິທີການສະເພາະຂອງການປະຕິບັດສະມາທິແມ່ນໄດ້ຮັບການພັດທະນາມາເປັນລຳດັບ. ການຮັບຮູ້ຂອງຊາວໂລກຕາເວັນຕົກກ່ຽວກັບມໍລະດົກທາງດ້ານສາສະໜາແລະວັດທະນະທຳຂອງລາວນີ້ຍັງໜ້ອຍຫຼາຍ. ໃນການວາງສະແດງຂອງພວກເຮົາ, ພວກເຮົາພະຍາຍາມນຳສະເໜີໃຫ້ທ່ານໄດ້ເຫັນເຖິງປະເພນີອັນໜຶ່ງທີ່ທັງຖືກເຊື່ອງຊ້ອນແລະງົດງາມ.*

*ພະພຸດສາສະໜາໃນລາວເປັນທີ່ຮູ້ຈັກກັນໃນຮູບແບບຂອງ ສະມະຖະ (ການປະຕິບັດສະມາທິທີ່ນຳໄປສູ່ຄວາມສະຫງົບທາງຈິດໃຈ) ແລະ ວິປັດສະນາ (ການປະຕິບັດສະມາທິເພື່ອພັດທະນາສະຕິແລະປັນຍາຮູ້ແຈ້ງ). ສະມະຖະເປັນວິທີການປະຕິບັດທີ່ແຜ່ຫຼາຍ ເຊິ່ງອອກຕົນຍາດໂຍມເຄີຍປະຕິບັດກັນເປັນປະຈຳ, ໃນຂະນະທີ່ ວິປັດສະນາເປັນການປະຕິບັດທີ່ຈຳກັດຢູ່ໃນບາງສູນລວມໃນວັດເຊິ່ງຈັດຂຶ້ນຢູ່ອ້ອມພະວິປັດສະນາຈານຜູ້ທີ່ສາມາດຈັດຂຶ້ນເປັນຄັ້ງຄາວ.*

*ພະສົງຫຼວງພະບາງຍັງປະຕິບັດປະລິວາດສະກຳ, ໃນເວລາທີ່ເພິ່ນຫຼີກໄປປະຕິບັດສະມາທິໃນສະຖານທີ່ໂດດດ່ຽວໃນປ່າເປັນເວລາ 14 ວັນ ແລະພັກຢູ່ໃນຕູບກຳ ໃນຂະນະທີ່ເພິ່ນປະຕິບັດກິດລະບຽບເຄັ່ງຄັດກັບຄວາມຫງຽບແລະສູດມົນດ້ວຍບົດສູດພິເສດ. ຍັງມີການປະຕິບັດທຸດົງຄະວັດ ເຊິ່ງພະສົງຈະຢູ່ແລະຍ່າງຕາມປ່າ, ມີກົດ (ຄັນຮົ່ມ) ໃຫຍ່ໜຶ່ງອັນກາງເປັນບ່ອນກຳບັງ. ການແຍກຕົວໄປຢູ່ໂດດດ່ຽວທັງຮ່າງກາຍແລະຈິດໃຈນີ້ເປັນສ່ວນສຳຄັນໃນການປະຕິບັດສະມາທິຂອງພະສົງໃຫ້ມີຄວາມສະຫງົບ.*

*ການວາງສະແດງການປະຕິບັດສະມາທິໃນຫຼວງພະບາງຂອງພວກເຮົາ*
*ແບ່ງອອກເປັນສອງພາກສ່ວນຄືທາງດ້ານປະຫວັດສາດແລະຮ່ວມສະໄໝ.*

*ພາກສ່ວນທາງດ້ານປະຫວັດສາດສະແດງຮູບພາບຕົ້ນສະບັບທີ່ຖ່າຍຫຼືສະສົມໂດຍພະສົງ ເປັນເວລາຫຼາຍກວ່າ 100 ປີ ທີ່ເກັບໄວ້ໃນຕູ້ແກ້ວສາມໜ່ວຍ: ຕູ້ທຳອິດສະແດງຮູບພາບສາທຸໃຫຍ່ ຊາຍສະມຸດ ໂຊຕິໂກ ເປັນເຊື້ອເຈົ້າທີ່ບວດແລ້ວໄປສຶກສາການປະຕິບັດສະມາທິທີ່ປະເທດໄທແລະພະມ້າ ໄດ້ເລີ່ມກໍ່ຕັ້ງສຳນັກວິປັດສະນາກຳມະຖານທີ່ວັດປ່າໂພນເພົາ, ຫຼວງພະບາງ ໃນທ້າຍຊຸມປີ 1960 ຕູ້ທີ່ສອງສະແດງຮູບພາບການປະຕິບັດສະມາທິທີ່ກ່ຽວຂ້ອງກັບສາທຸໃຫຍ່ຄຳຈັນ ວິຣະຈິດຕະມະຫາເຖລະ. ຕູ້ທີ່ສາມສະແດງຮູບພາບການປະຕິບັດສະມາທິຂອງແມ່ຂາວ ທີ່ຖ່າຍໃນລະຫວ່າງຊຸມປີ 1940 ແລະ 1950 ໂດຍສາທຸໃຫຍ່ອຸ່ນເຮືອນ ທາສະປັນໂຍ ວັດໜອງ ສີຄູນເມືອງ. ຮູບພາບເຫຼົ່ານີ້ແມ່ນຮູບພາບຫາຍາກທີ່ສຸດໃນໂລກຂອງພຸດທະສາສະໜານິກາຍເຖລະວາດ.*

*ພາກສ່ວນທີ່ເປັນຮູບພາບຮ່ວມສະໄໝໄດ້ສະແດງຫໃຫ້ເຫັນການປະຕິບັດສະມາທິປັດສະນາໃນປັດຈຸບັນທີ່ໄດ້ຟື້ນຕົວຂຶ້ນມາອີກຄັ້ງໜຶ່ງໃນຫຼວງພະບາງ. ການຟື້ນຕົວຂອງພະພຸດທະສາສະໜາໃນລາວໃນຫຼາຍປີມານີ້ເຮັດພະສົງຫຼວງພະບາງຮື້ຟື້ນການສອນການປະຕິບັດວິປັດສະນາຂຶ້ນຢ່າງເປັນລະບົບແລະຢ່າງກ້າຫານ. ຮູບພາບແຜ່ນໃຫຍ່ທີ່ຈັດສະແດງໄວ້ເທິງຝາດ້ານໃຕ້ແມ່ນການສອນການປະຕິບັດຂອງຄະນະສົງ.*

*ຮູບພາບຂາວດຳສີ່ຫຼ່ຽມຈະຕຸລັດເຫຼົ່ານີ້ຖ່າຍໂດຍ ອາຈານຮັນສ໌ ເກອອກ ເບີເກີ ເປັນໝາກຜົນຂອງໂຄງການຊຸມຊົນມີສ່ວນຮ່ວມແບບພິເສດ, ທີ່ພະສົງຫຼວງພະບາງໄດ້ເຮັດວຽກຮ່ວມກັບນັກສິລະປິນຊາວຕາເວັນຕົກເພື່ອພະຍາຍາມລວບລວມເອກະສານກ່ຽວກັບການປະຕິບັດແລະການສິດສອນສະມາທິຂອງເພິ່ນ. ຮູບພາບແຕ່ລະແຜ່ນແມ່ນໝາກຜົນຂອງການພິຈາລະນາຢ່າງຖືກຕ້ອງ ຖືກຄັດເລືອກໂດຍພະສົງ ແລະເປັນລາຍງານທີ່ມີຄ່າຍິ່ງຂອງພວກເພິ່ນທີ່ສະແດງຕໍ່ຊາວໂລກ.*

*ທ່ານອາຈານ ຮັນສ໌ ເກອອກ ເບີເກີ ຖ່າຍຮູບພາບເຫຼົ່ານີ້ໃນຊ່ວງຈັດການປະຕິບັດວິປັດສະນາສອງຄັ້ງ ໃນປີ 2004 ແລະ ປີ 2005. ຮູບພາບເຫຼົ່ານີ້ເປັນພາກສ່ວນໜຶ່ງຂອງໂຄງການ "ສັນຕິໃນແຜ່ນດິນ", ເຊິ່ງເປັນໂຄງການເພື່ອສິລະປະແລະການສຶກສາດຳເນີນການລະຫວ່າງ ນະຄອນນິວຍອກແລະຫຼວງພະບາງ. ຮູບພາບເຫຼົ່ານີ້ໄດ້ຈັດວາງສະແດງມາແລ້ວຕັ້ງແຕ່ປີ 2006 ເຖິງ 2013 ໃນຫົວຂໍ້ THE FLOATING BUDDHA (ພະພຸດທະເຈົ້າລອຍອົງ) ທີ່ຫໍພິພິດທະພັນແຫ່ງຊາດຫຼວງພະບາງ. ປັດຈຸບັນນີ້, ຮູບພາບດັ່ງກ່າວຍັງໄດ້ກາຍເປັນພາກສ່ວນໜຶ່ງຂອງຫໍພິພິດທະພັນໃນໂລກຕາເວັນຕົກ ຄື ຫໍພິພິດທະພັນສິລະປະສະໄໝໃໝ່ ທີ່ນະຄອນນິວຍອກ ແລະການສະສົມຮູບພາບຂອງສ່ວນບຸກຄົນ.*

*ສະຕິປັດຖານສູດ, ເຊິ່ງເປັນພະສູດທີ່ອະທິບາຍເຖິງການປະຕິບັດວິປັດສະນາ ໄດ້ກຳນົດການຝຶກອິລິຍະບົດພື້ນຖານສີ່ປະການຄື: ນັ່ງ, ຍືນ, ນອນ ແລະຍ່າງ. ການເຄື່ອນໄຫວປະຕິບັດຕາມອິລິຍະບົດເຫຼົ່ານີ້ຕ້ອງກຳນົດຢ່າງລະມັດລະວັງ ແລະຈະຕ້ອງສຶກສາຈາກນັກປະຕິບັດ. ການປະຕິບັດວິປັດສະນາທັງສອງຄັ້ງຂອງພະສົງມີແມ່ຂາວກຸ່ມໃຫຍ່ໜຶ່ງເຂົ້າຮ່ວມແລະປະຕິບັດຕາມຄຳແນະນຳຂອງແມ່ຂາວໜຸ່ມຜູ້ໜຶ່ງທີ່ມາຈາກພາກໃຕ້, ຜູ້ທີ່ສ້າງຕັ້ງສຳນັກແມ່ຂາວຢູ່ທີ່ນັ້ນ. ພາຍໃຕ້ການແນະນຳຂອງສາທຸໃຫຍ່ອ່ອນແກ້ວ ກິດຕິພັດໂທ, ການສອນວິປັດສະນາດັ່ງກ່າວນີ້ປັດຈຸບັນແມ່ນຈັດຂຶ້ນເປັນປະຈຳຢູ່ຫຼວງພະບາງ, ແລະ ເປັນທີ່ດຶງດູດຈິດໃຈຂອງພະສົງສາມະເນນຈຳນວນຫຼວງຫຼາຍຈາກບັນດາແຂວງພາກເໜືອຂອງລາວ. ການປະຕິບັດວິປັດສະນານີ້ເປັນພາກສ່ວນໜຶ່ງຂອງໂຄງການການສຶກສາຂອງພະສົງທີ່ມຸ່ງໝັ້ນເພື່ອການສ້າງຕັ້ງສະຖາບັນການສຶກສາສົງຊັ້ນສູງໃນຫຼວງພະບາງ.*

* * * * *

*ການວາງສະແດງຈັດໂດຍ ສູນຂໍ້ມູນເອກະສານຮູບພາບພະພຸດທະສາສະໜາ*
*ພາຍໃຕ້ການອຸປະຖຳຂອງສາທຸໃຫຍ່ອ່ອນແກ້ວ ກິດຕິພັດໂທ*
*ຈັດໂດຍ ຄຳວອນ ບຸນຍະພອນ ແລະ ບຸນຊູ ໄຊທຳ ຮ່ວມກັບອາຈານ ຮັນສ໌ ເກອອກ ເບີເກີ.*
*ອອກແບບໂດຍ ແອນນາ ໄວລ໌, ຈັດການໂດຍ ໄບລອັນ ລົງແຮມ, ລາຍດອກ ໂດຍ ນິດຖາຄົງ ສົມສະນິດ*

*ຫ້ອງວາງສະແດງບູລະນະໂດຍ ໂຄງການມໍລະດົກພະພຸດທະສາສະໜາ ໂດຍໄດ້ຮັບທຶນຈາກມູນນິທິບາດິວ,*
*ຕູ້ແກ້ວສະໜັບສະໜູນໂດຍ ກອງທຶນສະຖານທູດອາເມລິກາສຳລັບປະເທດລາວ*
*ຮູບພາບປະຫວັດສາດຄົ້ນຄວ້າພາຍໃຕ້ໂຄງການເອກະສານທີ່ຢູ່ໃນສະພາບຊຸດໂຊມຂອງຫໍສະໝຸດອັງກິດ (2006-2010)*

*ຮູບຖ່າຍຂອງອາຈານຮັນສ໌ ເກອອກ ເບີເກີ*
*ຂໍຂອບໃຈ ທ່ານນາງ ຟຣອງ ມໍຣິນ, ໂຄງການ ສັນຕິໃນແຜ່ນດິນ (2004-2008)*

* * * * *

*ປຶ້ມຮູບການວາງສະແດງ ພະພຸດທະເຈົ້າລອຍອົງ ແລະປຶ້ມຈາກສູນຂໍ້ມູນເອກະສານຮູບພາບພະພຸດທະສາສະໜາ ທ່ານສາມາດເປັນເຈົ້າຂອງໄດ້*

ບີເອ
Buddhist Archive of Photography